# ຖະແຫຼງການຮ່ວມ
# ຂອງລັດຖະມົນຕີປ້ອງກັນປະເທດອາຊຽນ ວ່າດ້ວຍຜົນສຳເລັດ
# ຂອງກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ ໃນການຈັດຕັ້ງປະຕິບັດແຜນແມ່ບົດ
# ປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025

1. ກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນວົງແຄບ (ເຊິ່ງເອີ້ນວ່າ: ກອງປະຊຸມ ADMM Retreat) ໄດ້ຈັດຂຶ້ນທີ່ນະຄອນຫຼວງພະບາງ, ສປປ ລາວ ໃນວັນທີ 05 ມີນາ 2024;
2. **ໂດຍຍໍ້າຄືນເຖິງ** ວິໄສທັດປະຊາຄົມອາຊຽນ 2025 ເພື່ອໃຫ້ບັນລຸລະບຽບການ, ຕາມທິດປະຊາຊົນ ແລະ ປະຊາຊົນເປັນໃຈກາງວິໄສທັດດຽວຂອງອາຊຽນ, ເອກະລັກດຽວ, ປະຊາຄົມດຽວ, ລວມທັງການເພີ່ມທະວີຂີດຄວາມສາມາດໃນການຮັບມືກັບສິ່ງທ້າທາຍຢ່າງມີປະສິດທິຜົນ ແລະ ອາຊຽນທີ່ເປັນພາກພື້ນທີ່ມີວິໄສທັດກວ້າງໄກ ຂອງບັນດາປະຊາຄົມໂລກ, ການຮັກສາຄວາມເປັນແກນກາງ ແລະ ຄວາມສາມັກຄີຂອງອາຊຽນ;
3. **ໂດຍຮັບຮູ້ເຖິງ** ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ, ເຊິ່ງເປັນວິໄສທັດຂອງປະຊາຄົມອາຊຽນໃນປະຈຸບັນທີ່ໃກ້ຈະສຳເລັດໃນປີ 2025. ໃນຂະນະທີ່ຄວາມພະຍາຍາມຕ່າງໆພ້ອມດຳເນີນການ ໃຫ້ປະກົດຜົນເປັນຈິງຕາມທິດທາງທີ່ໄດ້ກຳນົດໄວ້ໃນແຜນແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025, ບັນດາກິດຈະກຳຕ່າງໆ ຕ້ອງສືບຕໍ່ປະຕິບັດ ໃຫ້ສອດຄ່ອງກັບບັນດາທິດທາງຕ່າງໆ ຄືດັ່ງທີ່ຜ່ານມາ;
4. **ໂດຍຮັບຮູ້ເຖິງ** ຄວາມໝັ້ນໝາຍຂອງບັນດາປະເທດສະມາຊິກອາຊຽນ ໃນການຈັດຕັ້ງປະຕິບັດແຜນແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025 ໂດຍຜ່ານການເສີມສ້າງຄວາມເຂັ້ມແຂງຂອງກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ, ໃນເວລາດຽວກັນ ເພີ່ມທະວີຄວາມເປັນແກນກາງຂອງອາຊຽນ ໃນຂອບການຮ່ວມມືຂອງກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ-ບວກ, ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການສົ່ງເສີມການຮ່ວມມືໃຫ້ເປັນຮູບປະທຳ ລະຫວ່າງບັນດາປະເທດສະມາຊິກອາຊຽນ, ພ້ອມທັງເປັນການພົວພັນກັບປະເທດເພື່ອນມິດ ແລະ ຄູ່ເຈລະຈາຂອງອາຊຽນ;
5. **ໂດຍໄດ້ຮັບແຮງບັນດານໃຈ** ຈາກການຮຽກຮ້ອງຂອງບັນດາປະເທດສະມາຊິກອາຊຽນ ໃນການຮັບມືກັບຜົນກະທົບຈາກບັນດາສິ່ງທ້າທາຍ ແລະ ການຮັກສາຄວາມສາມັກຄີ ຕາມຄວາມມຸ່ງມາດປາດຖະໜາ ແລະ ເຈດຕະນາລົມຮ່ວມກັນ ໃນການດຳລົງຄົງຢູ່ໃນພາກພື້ນແຫ່ງສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບ ດ້ວຍການປົກປັກຮັກສາ ແລະ ການເພີ່ມທະວີຄວາມເປັນເອກະພາບ ແລະ ການຮ່ວມມືດ້ານວຽກງານປ້ອງກັນຊາດເພື່ອສຳເລັດບັນດາຈຸດປະສົງຂອງແຜນແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ;

6. **ໂດຍໄດ້ຮັບການຊຸກຍູ້** ຈາກຜົນສຳເລັດຂອງຂະແໜງການປ້ອງກັນຊາດ ໃນການສົ່ງເສີມເວທີປຶກສາຫາລື ແລະ ການຮ່ວມມືທີ່ເປັນຮູບປະທຳ, ລວມທັງການຍຶດໝັ້ນຄວາມເປັນແກນກາງຂອງອາຊຽນ ໃນທ່າມກາງແຫ່ງການຂະຫຍາຍຕົວໃນການພົວພັນຮ່ວມມືກັບພາຍນອກ ຕາມຄວາມມຸ້ງມາດປາດຖະໜາໃນແຜນແມ່ບົດແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025;

7. **ໂດຍຮັບຮູ້ເຖິງ** ການເພີ່ມຂຶ້ນຂອງການມີສ່ວນຮ່ວມຂອງຂະແໜງການປ້ອງກັນຊາດ ໃນວຽກງານຂອງບັນດາຂະແໜງການຕ່າງໆ, ລວມທັງວຽກງານການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ບັນເທົາທຸກໄພພິບັດ, ຄວາມໝັ້ນຄົງທາງທະເລ, ການຕ້ານການກໍ່ການຮ້າຍ ແລະ ການຄຸ້ມຄອງຊາຍແດນ, ເຊິ່ງເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາວຽກງານທີ່ສຳຄັນຂອງແຜນແມ່ບົດປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025 ທີ່ກ່ຽວຂ້ອງກັບກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ ແລະ ອາຊຽນ-ບວກ (ADMM ແລະ ADMM-ບວກ);

8. **ໂດຍຮັບຮູ້ເຖິງ** ຄວາມສຳຄັນຂອງກອງປະຊຸມ ADMM ແລະ ADMM-ບວກ ທີ່ເປັນກົນໄກສຳຄັນສຳລັບໂຄງສ້າງຄວາມໝັ້ນຄົງຂອງພາກພື້ນ, ເຊິ່ງຊ່ວຍໃຫ້ແກ່ການປຶກສາຫາລືດ້ານຍຸດທະສາດ ແລະ ການຮ່ວມມືທີ່ເປັນຮູບປະທຳ ສຳລັບຂະແໜງການປ້ອງກັນຊາດ ທີ່ມີອາຊຽນ ເປັນແກນກາງ;

9. **ສະແດງຄວາມຊົມເຊີຍຕໍ່** ຄວາມຄືບໜ້າຢ່າງຕໍ່ເນື່ອງຂອງການຮ່ວມມືທີ່ເປັນຮູບປະທຳທີ່ມີຢູ່ ພາຍໃຕ້ຂອບວຽກຂອງກອງປະຊຸມ ADMM ແລະ ADMM-ບວກ, ເຊິ່ງເປັນພື້ນຖານໃຫ້ແກ່ການສົ່ງເສີມ, ບໍ່ພຽງແຕ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ເທົ່ານັ້ນ, ແຕ່ຍັງເປັນການສ້າງຂີດຄວາມສາມາດ ແລະ ການປະຕິບັດງານຮ່ວມກັນ ລະຫວ່າງບັນດາປະເທດສະມາຊິກອາຊຽນ ແລະ ບັນດາປະເທດສະມາຊິກກອງປະຊຸມ ADMM-ບວກ ໃນການຮັບມືກັບສິ່ງທ້າທາຍຕໍ່ຄວາມໝັ້ນຄົງ ແລະ ປະກອບສ່ວນເຂົ້າໃນສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມເຂັ້ມແຂງຂອງພາກພື້ນ;

10. **ສະແດງຄວາມຊົມເຊີຍຕໍ່** ກອງປະຊຸມ ADMM ໃນການຮັບມືກັບສິ່ງທ້າທາຍ ແລະ ໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງທີ່ພົ້ນເດັ່ນ ຢ່າງທັນເວລາ ຄືດັ່ງກໍລະນີ ພະຍາດລະບາດໂຄວິດ-19 ທີ່ເຫັນໄດ້ເຖິງຄວາມພະຍາຍາມລວມຂອງບັນດາອົງການຈັດຕັ້ງທາງທະຫານ ແລະ ປ້ອງກັນຊາດອາຊຽນ ໃນການແກ້ໄຂບັນຫາດັ່ງກ່າວ ໂດຍຜ່ານການແລກປ່ຽນຂໍ້ມູນຂ່າວສານ ແລະ ການປະຕິບັດທີ່ດີ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານອຸປະກອນການແພດ ແລະ ຢາປິ່ນປົວພະຍາດ, ການຈັດກອງປະຊຸມສຳມະນາ ແລະ ການຝຶກຊ້ອມເທິງແຜນທີ່-ແຜນຮ່າງ;

11. **ສະແດງຄວາມຊົມເຊີຍຕໍ່** ກອງປະຊຸມ ADMM ສຳລັບຄວາມພະຍາຍາມຢ່າງຕັ້ງໜ້າໃນວຽກງານຄວາມໝັ້ນຄົງທີ່ພົ້ນເດັ່ນໃນປະຈຸບັນ ເປັນຕົ້ນແມ່ນ ຄວາມໝັ້ນຄົງທາງໄຊເບີ້, ວຽກງານແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ, ວຽກງານຊາວໜຸ່ມ, ສັນຕິພາບ ແລະ ຄວາມໝັ້ນຄົງ ກໍຄື ຄວາມໝັ້ນໝາຍໃນການຈັດຕັ້ງປະຕິບັດວິໄສທັດຂອງອາຊຽນ ກ່ຽວກັບອິນໂດ-ປາຊີຟິກ ເພື່ອປະກອບສ່ວນເຂົ້າໃນຄວາມພະຍາຍາມໃນການຮັບປະກັນການ

ສ້າງຕັ້ງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ ທີ່ສາມາດຮັບມືກັບໂຄງສ້າງພາກພື້ນທີ່ມີການປ່ຽນ ແປງ ຕາມການຊີ້ນໍາຂອງສະພາປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ;

12. **ໂດຍຮັບຮູ້ເຖິງ** ບົດບາດໜ້າທີ່ໃນປະຈຸບັນຂອງຄະນະສະເພາະກິດຂັ້ນສູງ ກ່ຽວກັບວິໄສທັດຂອງປະຊາຄົມອາຊຽນ ພາຍຫຼັງປີ 2025 ໃນການພັດທະນາວິໄສທັດຂອງປະຊາຄົມອາຊຽນ 2045 ແລະ ບັນດາແຜນຍຸດທະສາດ ແລະ ມີຄວາມຄາດຫວັງຕໍ່ການຮັບຮອງເອົາວິໄສທັດ ແລະ ແຜນຍຸດທະສາດດັ່ງກ່າວ ໃນປີ 2025.

ດັ່ງນັ້ນ, ພວກເຮົາ ຈຶ່ງສະແດງຄວາມໝັ້ນໝາຍຮ່ວມກັນ ຄືດັ່ງນີ້:

1. **ຮັກສາ** ບົດບາດຂອງກອງປະຊຸມ ADMM ແລະ ADMM-ບວກ ເປັນກົນໄກການຮ່ວມມືດ້ານວຽກງານປ້ອງກັນຊາດ ແລະ ຄວາມໝັ້ນຄົງຂັ້ນສູງສຸດຂອງບັນດາປະເທດສະມາຊິກອາຊຽນ ແລະ ອາຊຽນ-ບວກ ແລະ ຮັບຮູ້ຜົນປະໂຫຍດລວມຂອງເພື່ອນອາຊຽນ ແລະ ຄູ່ຮ່ວມມືທີ່ໄດ້ປະກອບສ່ວນເຂົ້າໃນວຽກງານຮັກສາ ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງພາກພື້ນ;

2. **ສືບຕໍ່ເພີ່ມທະວີ** ການຮ່ວມມືດ້ານວຽກງານປ້ອງກັນຊາດ ແລະ ການທະຫານ ໂດຍຜ່ານບັນດາກົນໄກຂອງກອງປະຊຸມ ADMM ແລະ ADMM-ບວກ ເພື່ອເສີມສ້າງຂີດຄວາມສາມາດ, ຄວາມເຂັ້ມແຂງ ແລະ ຄວາມສາມາດໃນການເຮັດວຽກຮ່ວມກັນ ລະຫວ່າງບັນດາປະເທດສະມາຊິກ ໂດຍຜ່ານການຈັດຕັ້ງປະຕິບັດແຜນແມ່ບົດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ;

3. **ປະກອບສ່ວນ** ເຂົ້າໃນການພັດທະນາແຜນຍຸດທະສາດຂອງປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ ແລະ ວິໄສທັດຂອງປະຊາຄົມອາຊຽນ 2045 ໃນຂະແໜງການປ້ອງກັນຊາດ ເພື່ອແກ້ໄຂບັນຫາຄວາມໝັ້ນຄົງທີ່ພົ້ນເດັ່ນໃນປະຈຸບັນ ແລະ ອະນາຄົດ ໃຫ້ມີປະສິດທິພາບ ແລະ ທັນເວລາ ແລະ ສະໜັບສະໜູນຄວາມເປັນແກນກາງຂອງອາຊຽນ;

4. **ສະແດງຄວາມຄາດຫວັງຕໍ່** ການຈັດຕັ້ງປະຕິບັດວິໄສທັດຂອງປະຊາຄົມອາຊຽນ 2025 ໃຫ້ປະກົດຜົນເປັນຈິງ, ລວມທັງການປະກອບສ່ວນຂອງຂະແໜງການປ້ອງກັນຊາດ ໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງພາກພື້ນ.